ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*********

# ນະໂຍບາຍກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ

## ສຳລັບ

# ຄະນະກຳມະການ ປະສານງານ ກອງທຶນໂລກ

## ເພື່ອຕ້ານພະຍາດເອດ, ວັນນະໂຣກ ແລະ ໄຂ້ຍຸງ

ສະບັບດັດແກ້ຄັ້ງທີ 2, ປີ 2016

## ສາລະບານ


1. ພາກທົ່ວໄປ .......... 3
2. ຂໍ້ກຳນົດທົ່ວໄປ .......... 3
3. ນິຍາມ .......... 4
4. ຕົວຢ່າງສະເພາະຂອງຂໍ້ຂັດແຍ່ງລວມມີ: .......... 5
5. ຍຸດທະສາດໃນການບໍລິຫານຈັດການຂໍ້ຂັດແຍ່ງດ້ານຜົນປະໂຫຍດ .......... 5
6. ຄວາມໂປ່ງໃສ ແລະ ການເປີດເຜີຍ .......... 6

ເອກະສານຕິດຄັດ 1: ແບບຟອມປະເມີນຂໍ້ຂັດແຍ່ງດ້ານຜົນປະໂຫຍດ .......... 9

7. 10
8. 10

ເອກະສານຕິດຄັດ 2: ການແຈ້ງຕົນເອງກ່ຽວກັບຜົນປະໂຫຍດຊໍ້າຊ້ອນ .......... 11

## 1. ພາກທົ່ວໄປ

ຄະນະກຳມະການປະສານງານກອງທຶນໂລກ ໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ເອີ້ນຫຍໍ້ວ່າ "CCM") ແມ່ນຄູ່ຮ່ວມງານຂອງຫຼາຍຂະແໜງການ ຊຶ່ງມີບົດບາດທີ່ສຳຄັນໃນຂະບວນການຂອງກອງທຶນໂລກ. ໜ້າທີ່ຂອງ CCM ແມ່ນເພື່ອປຶກສາຫາລື, ອະນຸມັດ ແລະ ຍື່ນບົດສະເໜີໂຄງການທີ່ແທດເໝາະກັບສະພາບຕໍ່ກອງທຶນໂລກ, ພ້ອມທັງຕິດຕາມກວດກາ, ປະເມີນຜົນ ແລະ ຊຸກຍູ້ການປະຕິບັດໂຄງການທີ່ໄດ້ນຳສະເໜີໂດຍ CCM ແລະ ໄດ້ຮັບອະນຸມັດທຶນຊ່ວຍເຫຼືອຈາກກອງທຶນໂລກ. ພ້ອມດຽວກັນນັ້ນແມ່ນເພື່ອເສີມຂະຫຍາຍການຮ່ວມມື ແລະ ການປະສານງານລະຫວ່າງຄູ່ຮ່ວມງານ ແລະ ຜູ້ປະຕິບັດໂຄງການຂອງກອງທຶນໂລກ. CCM ປະກອບດ້ວຍຕົວແທນຈາກຫຼາຍຂະແໜງການເຊັ່ນ: ຂະແໜງການຂອງລັດຖະບານ: 8 ທ່ານ (ລວມມີ 6 ກະຊວງ ແລະ 2 ອົງການຈັດຕັ້ງມະຫາຊົນ), ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ: 5 ທ່ານ, ແລະ ອົງການທີ່ບໍ່ສັງກັດລັດຖະບານ /ອົງການຈັດຕັ້ງທາງສັງຄົມ: 11 ທ່ານ (ລວມມີ 5 ທ່ານ ທີ່ເປັນຕົວແທນຈາກອົງການ ຈັດຕັ້ງ, ສະມາຄົມ ແລະ ອື່ນໆ ທີ່ເຮັດວຽກຮ່ວມກັບຜູ້ໄດ້ຮັບຜົນກະທົບ; ຜູ້ຕິດເຊື້ອ; ແມ່ຍິງ ແລະ ຍິງໜຸ່ມ; ຊາວໜຸ່ມ ແລະ ອື່ນໆ, 1 ທ່ານ ຈາກອົງການຈັດຕັ້ງທາງສາສະໜາ, 1 ທ່ານ ຈາກສະມາຄົມທີ່ບໍ່ສະແຫວງຫາຜົນກຳໄລ, 1 ທ່ານ ຈາກອົງການຈັດຕັ້ງເອກະຊົນ, 1 ທ່ານ ຈາກສະຖາບັນການສຶກສາ, 2 ທ່ານ ຈາກອົງການຈັດຕັ້ງ ສາກົນທີ່ບໍ່ສັງກັດລັດຖະບານ). ເນື່ອງຈາກມີຄວາມຫຼາກຫຼາຍທາງດ້ານສິດຜົນປະໂຫຍດ ແລະ ທັດສະນະ ຂອງພາກສ່ວນຕ່າງໆເຫຼົ່ານີ້, ສິ່ງສຳຄັນທີ່ສຸດ CCM ດຳເນີນວຽກງານໂດຍມີຄວາມສະເໝີພາບ, ມີຈັນຍາທຳ, ມີການປະສານສົມທົບ, ມີຄວາມ ປົ່ງໃສ ແລະ ເປີດກ້ວາງ. ນະໂຍບາຍນີ້ ກຳນົດຂໍ້ແນະນຳໃນການໄຈ້ແຍກ ແລະ ແກ້ໄຂ ຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ໂດຍອີງໃສ່ນິຍາມ ທີ່ຊັດເຈນໃນຂົງເຂດທີ່ອາດມີບັນຫາ, ໜ້າທີ່ໆຕ້ອງເປີດເຜີຍ, ແລະ ສັງລວມຂະບວນການໃນການບໍລິຫານຈັດການຂໍ້ຂັດແຍ່ງເຫຼົ່ານີ້ ຖ້າຫາກເກີດຂຶ້ນ.

## 2. ຂໍ້ກຳນົດທົ່ວໄປ

ນະໂຍບາຍນີ້ມີສອງຈຸດປະສົງດ້ວຍກັນຄື: 1) ນະໂຍບາຍນີ້ຖືກພັດທະນາຂຶ້ນເພື່ອຮັບປະກັນຄວາມຍຸຕິທຳ ໃນການຕັດສິນໃຈຂອງ CCM ເພື່ອປົກປ້ອງກຽດ, ຊື່ສຽງ ແລະ ຜົນປະໂຫຍດ ຂອງສະມາຊິກ CCM, 2) ເພື່ອຮັບປະກັນ ຄວາມໄວ້ວາງໃຈ ແລະ ຄວາມເຊື່ອໝັ້ນຢ່າງກ້ວາງຂວາງຈາກສະທາລະນະຊົນ ໃນການຕັດສິນໃຈ ແລະ ໃນການຕິດຕາມກວດກາວຽກງານຂອງ CCM.

ອີງໃສ່ມາດຕະຖານຂັ້ນຕ່ຳສຸດໃນການປະຕິບັດເງື່ອນໄຂທີ 6 ຂອງກອງທຶນໂລກ ເພື່ອຮັບປະກັນປະສິດທິພາບໃນການຕັດສິນໃຈ, CCM ຕ້ອງຮັບປະກັນວ່າຈຳນວນສະມາຊິກ CCM ທີ່ມີຜົນປະໂຫຍດຊ້ຳຊ້ອນ ແມ່ນບໍ່ເກີນ 1 ທ່ານ ຕໍ່ ພາກສ່ວນ (ໂດຍບໍ່ລວມອະດີດສະມາຊິກ ທີ່ບໍ່ມີສິດອອກສຽງ)[1]. ກອງທຶນໂລກຮັບຮູ້ວ່າ ໂດຍອີງໃສ່ລັກສະນະ ແລະ ອົງປະກອບທີ່ມີຄວາມຫຼາກຫຼາຍຂອງ CCM ແມ່ນສາມາດເຮັດໃຫ້ມີຂໍ້ຂັດແຍ່ງພາຍໃນເພີ່ມຂຶ້ນ ເມື່ອຜູ້ຮັບທຶນຍ່ອຍ (SR) ແລະ ຜູ້ຮັບທຶນຕົ້ນຕໍ

[1] Global Fund Guideline: Guidelines and Requirements for Country Coordinating Mechanism, Art.62-64.

(PR) ເປັນສະມາຊິກຂອງ CCM ທີ່ມີອຳນາດໃນການຕັດສິນໃຈ, ໂດຍສະເພາະໃນຕຳແໜ່ງ ປະທານ ແລະ ຮອງປະທານ.

ກອງທຶນໂລກເຂົ້າໃຈວ່າ CCM ຕ້ອງພິຈາລະນາບົດບາດຂອງ PR ແລະ SR ໂດຍອີງໃສ່ສະພາບພາຍໃນປະເທດ ແລະ ແນະນຳໃຫ້ພາກສ່ວນເຫຼົ່ານີ້ມີບົດບາດໂດຍບໍ່ມີສິດອອກສຽງ.

## 3. ນິຍາມ

ກ. ***ບຸກຄົນເປົ້າໝາຍ (Covered Individual):*** ໝາຍເຖິງ ປະທານ; ຮອງປະທານ; ສະມາຊິກ ແລະ ສະມາຊິກສຳຮອງ CCM, ຄະນະກຳມະການບໍລິຫານງານ (Ex-Com), ຄະນະກຳມະການກວດກາ (OC), ແລະ ຄະນະກຳມະການຂົນຂວາຍແຫຼ່ງທຶນ (RMC), ສະມາຊິກຂອງແຕ່ລະໜ່ວຍງານວິຊາການ; ຄະນະກຳມະການ ຫຼື ໜ່ວຍງານສະເພາະກິດ, ກອງເລຂາ CCM ແລະ ພະນັກງານຂອງກອງເລຂາ, ຕະຫຼອດເຖິງ ຜູ້ຈັດການ ແລະ ພະນັກງານຂອງ PR, SR ແລະ SSR.

ຂ. ***ບຸກຄົນທີ່ກ່ຽວຂ້ອງ (Associated Person)*** ແມ່ນຄູ່ສົມລົດ, ລູກຫຼານ (minor child), ໝູ່ຄູ່ ຫຼື ຍາດຕິພີ່ນ້ອງ (domestic partner or kin) ຂອງບຸກຄົນເປົ້າໝາຍ[2].

ຄ. ***ສະຖາບັນທີ່ກ່ຽວຂ້ອງ (Associated Institution)*** ແມ່ນ (i) ອົງການຈັດຕັ້ງ ຫຼື ສະຖາບັນຂອງລັດ ທີ່ບຸກຄົນເປົ້າໝາຍ ເຮັດວຽກຢູ່ ຊຶ່ງອາດເປັນຜູ້ຈັດການ, ຜູ້ອຳນວຍການ, ນາຍຄັງ, ຄູ່ຮ່ວມງານ ຫຼື ພະນັກງານ, ຊຶ່ງໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ, ຫຼື ຊຶ່ງກອງທຶນໂລກໄດ້ມີການຕົກລົງ, ມີສັນຍາ, ຫຼື ມີຄວາມສຳພັນ; ຫຼື (ii) ບຸກຄົນ, ອົງການຈັດຕັ້ງ, ບໍລິສັດ, ສະຖາບັນຂອງລັດ ຫຼື ສະຖາບັນທຽບເທົ່າ ຊຶ່ງ ບຸກຄົນເປົ້າໝາຍ ກຳລັງເຈລະຈາ ຫຼື ມີການກະກຽມ ກ່ຽວກັບວຽກເຮັດງານທຳໃນອານາຄົດ.

ງ. ***ແບບສ່ວນບຸກຄົນແລະໂດຍລວມ (Personally and substantially)***: ການເຂົ້າຮ່ວມແບບສ່ວນບຸກຄົນແມ່ນການເຂົ້າຮ່ວມໂດຍກົງ, ລວມທັງ, ຕົວຢ່າງ, ໃນການພິຈາລະນາເລື່ອງທີ່ສຳຄັນໃນກອງປະຊຸມ ຂອງປະທານ/ຮອງປະທານ, ຫຼື ໃນການຕິດຕາມຊຸກຍູ້ໂດຍກົງຕໍ່ຜູ້ທີ່ຢູ່ພາຍໃຕ້ການຄຸ້ມຄອງໃນບາງເລື່ອງ. ການເຂົ້າຮ່ວມໂດຍລວມ ໝາຍເຖິງການມີສ່ວນຮ່ວມຂອງບັນດາບຸກຄົນເປົ້າໝາຍຊຶ່ງມີຄວາມສຳຄັນໃນເລື່ອງດັ່ງກ່າວ.

ຈ. ***ຂໍ້ຂັດແຍ່ງດ້ານຜົນປະໂຫຍດ (A conflict of interest)*** ເກີດຂຶ້ນເມື່ອບຸກຄົນເປົ້າໝາຍເຂົ້າຮ່ວມແບບສ່ວນບຸກຄົນແລະໂດຍລວມຢ່າງເປັນທາງການໃນເລື່ອງໃດນຶ່ງ ຊຶ່ງຜູ້ກ່ຽວກໍຮູ້ວ່າ ຜູ້ກ່ຽວ ຫຼື ບຸກຄົນທີ່ກ່ຽວຂ້ອງ ຫຼື ສະຖາບັນທີ່ກ່ຽວຂ້ອງ ແມ່ນມີຜົນປະໂຫຍດດ້ານການເງິນ, ຖ້າວ່າເລື່ອງດັ່ງກ່າວນັ້ນຈະມີຜົນໂດຍກົງ ແລະ ອາດມີຜົນ ຕໍ່ຜົນປະໂຫຍດນັ້ນ. ໂດຍທົ່ວໄປແລ້ວ, ຂໍ້ຂັດແຍ່ງອາດເກີດຂຶ້ນໃນສະພາບດັ່ງຕໍ່ໄປນີ້:

- ເມື່ອຜົນປະໂຫຍດດ້ານການເງິນຂອງບຸກຄົນເປົ້າໝາຍ ຫຼື ຜົນປະໂຫຍດຂອງບຸກຄົນຫຼືສະຖາບັນທີ່ກ່ຽວຂ້ອງ ສາມາດມີອິດທິພົນຕໍ່ການປະຕິບັດໜ້າທີ່ ຫຼື ຄວາມຮັບຜິດຊອບ ຂອງ

[2] Kinship is the relationship between people created by marriage, birth, adoption, or other rituals.

ຜູ້ກ່ຽວ ທີ່ພົວພັນກັບ CCM ຫຼື ມີຜົນຕໍ່ການເບິ່ງບັນຫາຢ່າງມີເຫດຜົນ;

- ເມື່ອການປະຕິບັດຂອງບຸກຄົນເປົ້າໝາຍມີການປະນີປະນອມ ຫຼື ເຮັດໃຫ້ຂາດຄວາມໄວ້ວາງໃຈຈາກສາທາລະນະຊົນ ຕໍ່ CCM; ແລະ
- ເມື່ອບຸກຄົນເປົ້າໝາຍສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດສ່ວນຕົວ ຫຼື ເພື່ອຜົນປະໂຫຍດດ້ານການເງິນໂດຍກົງ ຂອງສະຖາບັນທີ່ກ່ຽວຂ້ອງ.

## 4. ຕົວຢ່າງສະເພາະຂອງຂໍ້ຂັດແຍ່ງລວມມີ:

- ສະມາຊິກ CCM ໂຄສະນາຂົນຂວາຍເພື່ອຮັບຮອງເອົາທຶນຊ່ວຍເຫຼືອໃດນຶ່ງ ຊຶ່ງອົງການຈັດຕັ້ງ ຫຼື ໜ່ວຍງານຂອງຕົນ ຈະເປັນຜູ້ຮັບທຶນຍ່ອຍ, ອົງກອນທີ່ຈັດຕັ້ງປະຕິບັດ, ຫຼື ມີບົດບາດບາງສ່ວນໃນການປະຕິບັດໂຄງການ, ຫຼື ໄດ້ຮັບຜົນປະໂຫຽດດ້ານການເງິນບາງສ່ວນໂດຍກົງ ;
- ສະມາຊິກ CCM ໂຄສະນາຂົນຂວາຍເພື່ອຮັບຮອງເອົານະໂຍບາຍໃດນຶ່ງ ຊຶ່ງ ອົງການຈັດຕັ້ງ ຫຼື ໜ່ວຍງານຂອງຕົນ ຈະໄດ້ຮັບຜົນປະໂຫຍດດ້ານການເງິນບາງສ່ວນໂດຍກົງ;
- ສະມາຊິກ CCM ສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນໃນ CCM ໂຄສະນາຂົນຂວາຍ ໂດຍພະຍາຍາມໃຊ້ວິທີການໃດນຶ່ງ ເພື່ອຮັບປະກັນໃຫ້ມີການອະນຸມັດສັນຍາການບໍລິການ ລະຫວ່າງ ຜູ້ຮັບທຶນຕົ້ນຕໍ ແລະ ສະຖາບັນທີ່ກ່ຽວຂ້ອງ; ຫຼື
- ສະມາຊິກຂອງໜ່ວຍງານວິຊາການ ຊຶ່ງເປັນພະນັກງານລັດ ຫຼື ອົງການຈັດຕັ້ງ ທີ່ເຂົ້າຮ່ວມໃນການປະເມີນບົດສະເໜີໂຄງການເພື່ອຂໍທຶນ ແລະ ໃຫ້ບໍລິການດ້ານວິຊາການ ຊຶ່ງສະຖາບັນທີ່ກ່ຽວຂ້ອງ ມີຜົນປະໂຫຍດຢ່າງຫຼວງຫຼາຍ.
- ເມື່ອຕຳແໜ່ງທີ່ສຳຄັນ (ຕົວຢ່າງ: ປະທານ/ຮອງປະທານ CCM ແລະ ປະທານຄະນະກຳມະການໃດນຶ່ງ) ແມ່ນບຸກຄົນທີ່ມາຈາກອົງການຈັດຕັ້ງ ຊຶ່ງໄດ້ຮັບທຶນຈາກກອງທຶນໂລກ.
- ເມື່ອສະມາຊິກ CCM ທີ່ມາຈາກອົງການຈັດຕັ້ງ ຊຶ່ງໄດ້ຮັບທຶນຈາກກອງທຶນໂລກ ແລະມາຮ່ວມປະຊຸມປົກກະຕິ, ດັ່ງນັ້ນ ສາມາດມີອິດທິພົນຕໍ່ການຕັດສິນໃຈ.
- ສະຖານທີ່ຕັ້ງຂອງກອງເລຂາ CCM ແລະ/ຫຼື ຄະນະກຳມະການຈັນຍາທຳ ແລະ ຄະນະກຳມະການຕິດຕາມກວດກາ: ເມື່ອຫ້ອງການເຫຼົ່ານີ້ ໄດ້ຮັບການອຸບປະຖຳໂດຍ ຜູ້ຮັບທຶນກອງທຶນໂລກ, ທັດສະນະທີ່ຂາດຄວາມຍຸຕິທຳສາມາດເກີດຂຶ້ນໄດ້.

## 5. ຍຸດທະສາດໃນການບໍລິຫານຈັດການຂໍ້ຂັດແຍ່ງດ້ານຜົນປະໂຫຍດ

- ການເປີດເຜີຍກ່ຽວກັບຜົນປະຜົນຊໍ້າຊ້ອນທັງໝົດ.
- ການຖອນໂຕຂອງສະມາຊິກຈາກການສົນທະນາ ແລະ ການຕັດສິນໃຈ ທີ່ມີການພົວພັນກັບຜົນປະໂຫຍດຂອງຕົນ.
- ການເຂົ້າຮ່ວມຂອງສະມາຊິກຄະນະກຳມະການທີ່ເປັນອິດສະລະ ໃນການຕັດສິນບັນຫາ
- ການສັບປ່ຽນ ຫຼື ກຳໜົດຄວາມຮັບຜິດຊອບຂອງສະມາຊິກຄືນໃໝ່ ເພື່ອຫຼີກລ້ຽງຜົນປະໂຫຍດຊໍ້າຊ້ອນ.

- ແນະນຳໃຫ້ມີການລົງໂທດສະເພາະເມື່ອມີຫຼັກຖານວ່າບໍ່ໄດ້ແຈ້ງຜົນປະໂຫຍດ.

ສິ່ງເຫຼົ່ານີ້ແມ່ນເປັນພຽງຕົວຢ່າງເທົ່ານັ້ນ ແລະ ບໍ່ມີຈຸດປະສົງເພື່ອໃຫ້ລາຍລະອຽດກໍລະນີທັງຫມົດ ຂອງການຂັດແຍ່ງທີ່ອາດເກີດຂຶ້ນຫຼືເກີດຂຶ້ນແລ້ວ ຫຼື ເພື່ອກຳນົດຍຸດທະສາດຢ່າງແທ້ຈິງ, ແຕ່ເປັນພຽງຫຼັກການພື້ນຖານ ຊຶ່ງສາມາດເປັນບ່ອນອີງໃຫ້ແກ່ CCM ເພື່ອແກ້ໄຂເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ. ແຕ່ລະສະຖານະການ ຈະຖືກແກ້ໄຂບົນພື້ນຖານຂອງຄວາມເປັນຈິງແລະເງື່ອນໄຂສະເພາະ. ແຕ່ເຖິງຢ່າງໃດກໍຕາມ, ການຕັດສິນໃຈແຕ່ລະຄັ້ງ ຈະຕ້ອງປະຕິບັດຕາມຂໍ້ແນະນຳທີ່ໄດ້ລະບຸໃນນະໂຍບາຍນີ້, ຊຶ່ງຈະໄດ້ນຳໃຊ້ເຂົ້າໃນທຸກກິດຈະກຳ ທີ່ໄດ້ຮັບການຊ່ວຍເຫຼືອແລະສະໜັບສະໜູນຈາກກອງທຶນໂລກ.

## 6. ຄວາມໂປ່ງໃສ ແລະ ການເປີດເຜີຍ

ບຸກຄົນເປົ້າໝາຍທຸກຄົນ ຕ້ອງໄດ້ເປີດເຜີຍຜົນປະໂຫຍດຊ້ຳຊ້ອນທຸກຢ່າງທີ່ມີ, ລວມທັງສ່ວນທີ່ເກີດມາຈາກບຸກຄົນ ຫຼື ສະຖາບັນທີ່ກ່ຽວຂ້ອງ, ແລະ ລັກສະນະຂອງຜົນປະໂຫຍດຊ້ຳຊ້ອນດັ່ງກ່າວ, ໃນເມື່ອໃດທີ່ຕົນຮູ້ວ່າມີຂໍ້ຂັດແຍ່ງເກີດຂຶ້ນ ຫຼື ອາດເກີດຂຶ້ນ.

### 6.1 ການຫຼຸດຜ່ອນຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ອາດເກີດຂຶ້ນ

ກ. CCM ຈະປະເມີນຂໍ້ຂັດແຍ່ງດ້ານຜົນປະໂຫຍດໃນແຕ່ລະປີ ເພື່ອຄາດຄະເນສະພາບການເບິ່ງວ່າບຸກຄົນເປົ້າໝາຍອາດມີຜົນປະໂຫຍດຊ້ຳຊ້ອນເກີດຂຶ້ນ ຫຼື ເກີດຂຶ້ນແລ້ວ. ການປະເມີນແມ່ນເປັນໂອກາດໃຫ້ພະນັກງານ CCM ເປີດເຜີຍສາຍພົວພັນກັບໜ່ວຍງານອື່ນໆ ທີ່ອາດມີຜົນປະໂຫຍດຊ້ຳຊ້ອນໂດຍກົງ ຫຼື ທາງອ້ອມ ທີ່ມີອິດທິພົນຕໍ່ການຕັດສິນໃຈ/ການສົນທະນາກ່ຽວກັບວຽກງານຂອງ CCM - ເບິ່ງແບບຟອມໃນການປະເມີນໃນເອກະສານແບບທ້າຍທີ 1.

ຂ. ຖ້າປະທານມາຈາກຂະແໜງການຂອງລັດ ທີ່ມີຜົນປະໂຫຍດດ້ານການເງິນຈາກກອງທຶນໂລກ, ແຜນການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດຈະຕ້ອງລະບຸວ່າຈະຫຼຸດຜ່ອນຂໍ້ຂັດແຍ່ງດ້ານຜົນປະໂຫຍດພາຍໃນໃຫ້ຕ່ຳທີ່ສຸດໄດ້ຄືແນວໃດ. ພາຍໃຕ້ສະຖານະການດັ່ງກ່າວ, ຖ້າເປັນໄປໄດ້ປະທານ ຕ້ອງມາຈາກສະຖາບັນທີ່ມີສະຖານະທີ່ສູງກ່ວາສະຖາບັນທີ່ PR ຕັ້ງຢູ່.

ຄ. CCM ຈະຕ້ອງພະຍາຍາມເພື່ອຮັບປະກັນວ່າ ຮອງປະທານບໍ່ໄດ້ມາຈາກອົງກອນທີ່ໄດ້ຮັບທຶນຈາກກອງທຶນໂລກ. ຖ້າບັນຫານີ້ມີຄວາມເປັນໄປໄດ້ນ້ອຍ, ແຜນການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຈະຕ້ອງລະບຸວ່າຈະຫຼຸດຜ່ອນຂໍ້ຂັດແຍ່ງດ້ານຜົນປະໂຫຍດພາຍໃນ ໃຫ້ຕ່ຳທີ່ສຸດໄດ້ຄືແນວໃດ.

ງ. ຖ້າເຫັນວ່າມີຄວາມຈຳເປັນ, ແລະ ໂດຍສະເພາະເມື່ອ CCM ເຫັນວ່າອົງກອນໃດຈະໄດ້ຮັບທຶນຈາກກອງທຶນໂລກ, ສະມາຊິກສົມບູນແລະສຳຮອງຈາກອົງກອນນັ້ນຈະຕ້ອງແຈ້ງເມື່ອເຫັນວ່າຕົນເອງອາດມີຜົນປະໂຫຍດຊ້ຳຊ້ອນ, ແລະ ຈຳເປັນຈະຕ້ອງໄດ້ເຊັນໃບແຈ້ງກ່ຽວກັບຜົນປະໂຫຍດຊ້ຳຊ້ອນ - ຊຶ່ງໄດ້ຕິດຄັດໃນເອກະສານນີ້. ເມື່ອ CCM ໄດ້ພິມບັນຊີລາຍຊື່ສະມາຊິກສົມບູນ ແລະ ສຳຮອງຂອງ CCM ເພື່ອນຳໃຊ້ພາຍໃນ, ຈະຕ້ອງໄດ້ລະບຸວ່າອົງກອນ

ໃດໄດ້ຮັບທຶນຈາກກອງທຶນໂລກຫຼືບໍ່.

## 6.2 ຂັ້ນຕອນປະຕິບັດໃນເວລາມີຂໍ້ຂັດແຍ່ງດ້ານຜົນປະໂຫຍດເກີດຂຶ້ນ

ກ. ທຸກກໍລະນີຂໍ້ຂັດແຍ່ງດ້ານຜົນປະໂຫຍດຈະຕ້ອງໄດ້ແຈ້ງເປັນລາຍລັກອັກສອນ ແລະ ຕ້ອງສະເໜີໃຫ້ປະທານຮູ້ໂດຍທັນທີ. ທຸກພາກສ່ວນຈະຕ້ອງໄດ້ປຶກສາກັບກອງເລຂາ CCM ຖ້າຫາກມີຄຳຖາມກ່ຽວກັບການປະຕິບັດນະໂຍບາຍສະບັບນີ້.

ຂ. ແມ່ນໜ້າທີ່ຂອງປະທານ ໂດຍການຊ່ວຍເຫຼືອຈາກກອງເລຂາ CCM, ຈາກຊ່ຽວຊານອື່ນໆ ຫຼື ອົງກອນທີ່ເປັນກາງຈາກພາຍນອກ ຫຼື ບຸກຄົນທີ່ມີຄຳເຫັນວ່າມີຄວາມຈຳເປັນ ທີ່ຈະຕ້ອງທົບທວນຄືນກ່ຽວກັບການເປີດເຜີຍແລະການກຳນົດວ່າມີຂໍ້ຂັດແຍ່ງຫຼືບໍ່, ແລະ ຖ້າມີ, ຈະອອກຂໍ້ຍົກເວັ້ນຂອບເຂດໃຫ້ບຸກຄົນທີ່ກ່ຽວຂ້ອງສາມາດເຂົ້າຮ່ວມສົນທະນາບັນຫາຊຶ່ງກໍ່ໃຫ້ເກີດຄວາມຂັດແຍ່ງເພີ້ມຂຶ້ນ ຫຼືບໍ່. ໂດຍອີງຕາມຄວາມເໝາະສົມ, ປະທານ CCM ຍັງອາດນຳເອົາບັນຫາຕ່າງໆເພື່ອມາສົນທະນາແລະຕັດສິນຮ່ວມກັບສະມາຊິກ CCM ທັງໝົດ (ໂດຍບຸກຄົນທີ່ອາດມີຂໍ້ຂັດແຍ່ງບໍ່ໄດ້ເຂົ້າຮ່ວມ).

ຄ. ເມື່ອໄດ້ພິຈາລະນາວ່າມີຂໍ້ຂັດແຍ່ງດ້ານຜົນປະໂຫຍດເກີດຂຶ້ນ, ບຸກຄົນເປົ້າໝາຍຈະຕ້ອງບໍ່ໄດ້ຮັບອະນຸຍາດໃຫ້ມີສ່ວນຮ່ວມໃນເລື້ອງທີ່ມີຂໍ້ຂັດແຍ່ງ, ຈົນກ່ວາຈະໄດ້ຮັບຂໍ້ຍົກເວັ້ນ ຈາກປະທານ CCM. ໃນສ່ວນກ່ຽວຂ້ອງກັບ CCM, ບຸກຄົນເປົ້າໝາຍຈະບໍ່ໄດ້ຮັບອະນຸຍາດໃຫ້ອອກສຽງໃນເລື້ອງທີ່ມີຂໍ້ຂັດແຍ່ງ, ແລະ ຕ້ອງງົດການປະກອບຄຳເຫັນກ່ອນຈະມີການສົນທະນາ ຫຼື ອອກສຽງລົງມະຕິ ໃນເລື້ອງທີ່ມີຂໍ້ຂັດແຍ່ງ, ຈົນກ່ວາຈະໄດ້ຮັບຂໍ້ຍົກເວັ້ນຈາກປະທານ CCM. ການຍົກເວັ້ນດັ່ງກ່າວສາມາດກຳນົດຂຶ້ນໄດ້ເພື່ອເປີດໂອກາດໃຫ້ບຸກຄົນເປົ້າໝາຍໄດ້ມີສ່ວນຮ່ວມໃນລະດັບ ທີ່ປະທານ CCM ເຫັນວ່າເໝາະສົມ. ຕົວຢ່າງ, ປະທານ CCM ອະນຸຍາດໃຫ້ບຸກຄົນທີ່ກ່ຽວຂ້ອງສະເໜີຂໍ້ມູນດ້ານວິຊາການ, ແຕ່ບໍ່ແມ່ນໃຫ້ການແນະນຳ. ຫຼື ປະທານ CCM ອາດອະນຸຍາດໃຫ້ບຸກຄົນເປົ້າໝາຍເຂົ້າຮ່ວມກອງປະຊຸມເພື່ອເຮັດໜ້າທີ່ດ້ານບໍລິຫານຂອງຕົນ, ແຕ່ບໍ່ສາມາດເຂົ້າຮ່ວມການສົນທະນາ ກ່ຽວກັບເລື້ອງທີ່ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດ. ລາຍຊື່ຂອງພາກສ່ວນທີ່ມີສ່ວນຮ່ວມໃນຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ໄດ້ເຂົ້າຮ່ວມກອງປະຊຸມ ແລະ ບັນຫາທີ່ພົວພັນກັບຂໍ້ຂັດແຍ່ງນັ້ນ ຈະຕ້ອງໄດ້ບັນທຶກເຂົ້າໃນບົດບັນທຶກກອງປະຊຸມ.

ງ. ເມື່ອ CCM ພິຈາລະນາກ່ຽວກັບການລາຍງານ, ການຕັດສິນໃຈ ແລະ ການສະເໜີ ຫຼື ການແນະນຳເພື່ອຂໍອະນຸມັດ, ໂດຍທົ່ວໄປແລ້ວການມີສ່ວນຮ່ວມຂອງສະມາຊິກ CCM ຈະບໍ່ຖືວ່າມີຂໍ້ຂັດແຍ່ງດ້ານຜົນປະໂຫຍດ ເຖິງແມ່ນວ່າອົງກອນທີ່ສະມາຊິກເປັນຕົວແທນນັ້ນ ອາດມີຜົນປະໂຫຍດໂດຍກົງໃນເລື້ອດັ່ງກ່າວ. ເມື່ອ CCM ພິຈາລະນາບັນຫາສະເພາະ, ບຸກຄົນເປົ້າໝາຍ ຫຼື ບຸກຄົນອື່ນໆ ຈະຕ້ອງແຈ້ງຕໍ່ CCM ກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ອາດມີ ແລະ ຕ້ອງໄດ້ປະຕິບັດຕາມຂັ້ນຕອນທີ່ໄດ້ລະບຸໃວ້ໃນນະໂຍບາຍສະບັບນີ້.

ຈ. ສະມາຊິກ CCM ທີ່ເປັນຕົວແທນໃຫ້ແກ່ພາກສ່ວນໃດນຶ່ງ ອາດສາມາດມີຂໍ້ຂັດແຍ່ງດ້ານຜົນປະໂຫຍດໃນບາງສະພາບການ ເນື່ອງຈາກວ່າໃນການຕັດສິນໃຈນັ້ນ ແມ່ນມີສະມາຊິກຈາກພາກສ່ວນຂອງຕົນມີສ່ວນຮ່ວມນຳ. ໃນສະພາບການແນວນີ້ ບຸກຄົນເປົ້າໝາຍ ຫຼື ຫົວໜ້າຂອງພາກ

ສ່ວນດັ່ງກ່າວ ຕ້ອງໄດ້ແຈ້ງຕໍ່ປະທານ CCM ກ່ຽວກັບຂໍ້ຂັດແຍ່ງທີ່ອາດມີ. ແຕ່ລະຂັ້ນຕອນກ່ຽວກັບເລື້ອງນີ້ ຄວນໄດ້ອະທິບາຍຢ່າງຈັດເຈນ ແລະ ມີການບັນທຶກເພື່ອຮັບປະກັນຄວາມທ່ຽງທຳ.

ສ. ຖ້າບຸກຄົນເປົ້າໝາຍບໍ່ໄດ້ແຈ້ງກ່ຽວກັບຂໍ້ຜົນປະໂຫຍດຊໍ້າຊ້ອນຂອງຕົນ, ປະທານ CCM ຈະຕ້ອງດຳເນີນທຸກມາດຕະການທີ່ເໝາະສົມເພື່ອຍົກເລີກຜົນປະໂຫຍດທີ່ຜູ້ກ່ຽວໄດ້ຮັບ. ບຸກຄົນເປົ້າໝາຍຈະຕ້ອງຖືກລາຍງານໃຫ້ສະຖາບັນທີ່ກ່ຽວຂ້ອງກ່ຽວກັບຜົນການສອບສວນ ແລະ ການປະຕິບັດວິໃນ. ສະຖາບັນທີ່ກ່ຽວຂ້ອງຈະຕ້ອງໄດ້ຮັບການສະເໜີເພື່ອສົ່ງຕົວແທນຄົນໃໝ່ໂດຍ.

ຊ. ຖ້າປະທານມີຜົນປະໂຫຍດຊໍ້າຊ້ອນ, ປະທານຈະຕ້ອງມອບໝາຍໃຫ້ຮອງປະທານເພື່ອດຳເນີນການໃນໄລຍະທີ່ມີຂໍ້ຂັດແຍ່ງ. ຖ້າຮອງປະທານມີຜົນປະໂຫຍດຊໍ້າຊ້ອນເຊັ່ນດຽວກັນ, CCM/OC ຈະຕ້ອງແຕ່ງຕັ້ງຮັກສາການປະທານ ເພື່ອດຳເນີນການສຳລັບຊ່ວງເວລານັ້ນ.

ນະຄອນຫຼວງວຽງຈັນ, ວັນທີ..................

ປະທານຄະນະກຳມະການປະສານງານກອງທຶນໂລກ

# ເອກະສານຕິດຄັດ

## ເອກະສານຕິດຄັດ 1: ແບບຟອມປະເມີນຂໍ້ຂັດແຍ່ງດ້ານຜົນປະໂຫຍດ

**ຊື່ຂອງ CCM (ປະເທດ):**

**ສະຖານະພາບຂອງສະມາຊິກ ແລະ ຂໍ້ຂັດແຍ່ງທີ່ອາດເກີດຂື້ນ ໂດຍສັງເຂບ**

ບັນທຶກລາຍຊື່ຂອງສະມາຊິກ CCM, ຫ້ອງການ ຫຼື ຄະນະກຳມະການທີ່ໄດ້ຮັບມອບໝາຍ, ແລະ ໝາຍສະຖານະຂອງສະຖາບັນຂອງຜູ້ກ່ຽວ ວ່າເປັນ PR ຫຼື SR ຂອງກອງທຶນໂລກ.

ສົນທະນາກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ອາດມີ ແລະ ເນັ້ນເປັນສີນ້ຳເງິນໃສ່ສະມາຊິກທີ່ອາດມີຜົນປະໂຫຍດຊ້ຳຊ້ອນ.

ວັນທີ:

| | ສະມາຊິກ (ຊື່) | ອົງກອນ | ຂະແໜງ/ພາກ ສ່ວນ | ໜ້າທີ່ໃນ CCM | Ex-Com | RMC | OC | PR | SR | SSR | ອາດມີ COI | ປະເພດຂໍ້ຂັດແຍ່ງ | |
|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | ໂດຍກົງ | ທາງອ້ອມ |
| 1 | ທ່ານ ຣສ ດຣ. ພູທອນ ເມືອງປາກ | ກະຊວງສາທາລະນະສຸກ | ລັດຖະບານ | ປະທານ | x | | | x | | | x | x | |
| 2 | ທ່ານ ດຣ. ຣັດຕະນະໄຊ ເພັດສຸວັນ | ກະຊວງສາທາລະນະສຸກ | ລັດຖະບານ | ສະມາຊິກສຳຮອງ | | x | | x | | | x | x | |
| 3 | ທ່ານ ນາງ. ສີສົມບູນ ອຸນາວົງ | ກະຊວງແຜນການ ແລະ ການລົງທຶນ | ລັດຖະບານ | ສະມາຊິກສົມບູນ | | | | | | | | | |
| 4 | ທ່ານ. ມໍລະກົດ ວົງໄຊ | ກະຊວງແຜນການ ແລະ ການລົງທຶນ | ລັດຖະບານ | ສະມາຊິກສຳຮອງ | | x | | | | | | | |
| 5 | ທ່ານ. ອົງຄານສະດາ ມ່ວງຄຳ | ກະຊວງການເງິນ | ລັດຖະບານ | ສະມາຊິກສົມບູນ | | x | x | | | | | | |
| 6 | ທ່ານ ນາງ. ແພງຄ່ຽມ ໄຊຍະແກ້ວ | ກະຊວງການເງິນ | ລັດຖະບານ | ສະມາຊິກສຳຮອງ | | | | | | | | | |
| 7 | ທ່ານ. ໂຈມແຍງ ແພງທອງສະຫວັນ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ລັດຖະບານ | ສະມາຊິກສົມບູນ | | | | | | | | | |
| 8 | ທ່ານ. ດວງສີ ທຳມະວົງ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ລັດຖະບານ | ສະມາຊິກສຳຮອງ | | | | | | | | | |
| 9 | ທ່ານ. ອານຸພາບ ວົງໜໍ່ແກ້ວ | ກະຊວງການຕ່າງປະເທດ | ລັດຖະບານ | ສະມາຊິກສົມບູນ | | | | | | | | | |
| 10 | ທ່ານ. ດາວວີ ວົງໄຊ | ກະຊວງການຕ່າງປະເທດ | ລັດຖະບານ | ສະມາຊິກສຳຮອງ | | | | | | | | | |
| 11 | ທ່ານ. ແສງອາລຸນ ຍົດລືໄຊ | ກະຊວງພາຍໃນ | ລັດຖະບານ | ສະມາຊິກສົມບູນ | | | x | | | | | | |
| 12 | ທ່ານ ນາງ. ເຄືອວັນ ຈັນທະພູວົງ | ກະຊວງພາຍໃນ | ລັດຖະບານ | ສະມາຊິກສຳຮອງ | | | | | | | | | |
| 13 | ທ່ານ ນາງ. ຈົງຈິດ ວົງສາ | ສະຫະພັນກຳມະບານລາວ | ລັດຖະບານ | ສະມາຊິກສົມບູນ | | | | | | | | | |
| 14 | ທ່ານ. ທອງພິມ ວົງລະພາ | ສະຫະພັນກຳມະບານລາວ | ລັດຖະບານ | ສະມາຊິກສຳຮອງ | | | | | | | | | |
| 15 | ທ່ານ. ນາງ ໄກສະໝີ ລັດວິໄລວົງ | ສູນກາງສະຫະພັນແມ່ຍິງລາວ | ລັດຖະບານ | ສະມາຊິກສົມບູນ | | | | | | | | | |
| 16 | ທ່ານ. ນາງ ດາວວອນ ສີເມືອງວົງ | ສູນກາງສະຫະພັນແມ່ຍິງລາວ | ລັດຖະບານ | ສະມາຊິກສຳຮອງ | | | | | | | | | |
| 17 | Dr. Juliet Fleischl | World Health Organization (WHO) | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສົມບູນ | x | | | | | | | | |
| 18 | ທ່ານ. ທອງແດງ ສີລາກຸນ | UNAIDS | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສຳຮອງ | | | | | | | | | |
| 19 | Mrs. Fanny Gazagne | Embassy of France | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສົມບູນ | | | | | | | | | |
| 20 | Mr. Jérôme Dubois-Mercent | Embassy of France | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສຳຮອງ | | | | | | | | | |
| 21 | Ms. Saeda Makimoto | JICA | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສົມບູນ | | | | | | | | | |
| 22 | Dr. Moritoshi Iwagami | JICA | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສຳຮອງ | | | | | | | | | |
| 23 | Ms. Alexandria Huerta | USAID | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສົມບູນ | | | | | | | | | |
| 24 | ທ່ານ ນາງ. ບັນທິດາ ກົມພາສຸກ | World Bank | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສຳຮອງ | | x | | | | | | | |

**ຂອງ CCM (ປະເທດ):**

**ສະຖານະພາບຂອງສະມາຊິກ ແລະ ຂໍ້ຂັດແຍ່ງທີ່ອາດເກີດຂຶ້ນ ໂດຍສັງເຂບ**

ບັນທຶກລາຍຊື່ຂອງສະມາຊິກ CCM, ຫ້ອງການ ຫຼື ຄະນະກຳມະການທີ່ໄດ້ຮັບມອບໝາຍ, ແລະ ໝາຍສະຖານະຂອງສະຖາບັນຂອງຜູ້ກ່ຽວ ວ່າເປັນ PR ຫຼື SR ຂອງກອງທຶນໂລກ.

ສົນທະນາກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ອາດມີ ແລະ ເນັ້ນເປັນສິນ້ຳເງິນໃສ່ສະມາຊິກທີ່ອາດມີຜົນປະໂຫຍດຊ້ຳຊ້ອນ.

ວັນທີ:

| No. | ສະມາຊິກ (ຊື່) | ອົງກອນ | ຂະແໜງ/ພາກ ສ່ວນ | ໜ້າທີ່ໃນ CCM | Ex-Com | RMC | OC | PR | SR | SSR | ອາດມີ COI | ປະເພດຂໍ້ຂັດແຍ່ງ ໂດຍກົງ | ທາງອ້ອມ |
|---|---|---|---|---|---|---|---|---|---|---|---|---|---|
| 25 | Mr. Thomas LAMMAR | Embassy of the Grand-Duchy of Luxembourg | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສົມບູນ | | | | | | | | | |
| 26 | Mr. Peter Heimann | Lux-Development | ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ | ສະມາຊິກສຳຮອງ | | | x | | | | | | |
| 27 | ທ່ານ. ດຣ ນາງ ສຸລານີ ຈັນສີ | ສະພາກາແດງລາວ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | x | | | | x | | x | x | |
| 28 | ທ່ານ. ກິນ້ອຍ ພົງເດດ | ສະມາຄົມຜູ້ຕິດພະຍາດເອດ APL+ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | x | | | | x | x | x | |
| 29 | ພຣະອາຈານ. ອະທິປະໄຕ ໄມຕຣີຈິດ | ໂຄງການເມດຕາທຳ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | | | | x | x | x | |
| 30 | ພຣະອາຈານ. ອາໂນຊາ ໄມຕຣີຈິດ | ໂຄງການເມດຕາທຳ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | x | x | x | |
| 31 | ທ່ານ. ກົລະກັນ ທິບພະວົງ | ເຄືອຄ່າຍຕົວແທນຜູ້ຕິດພະຍາດເອດພາກກາງ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | x | | | | x | x | |
| 32 | ທ່ານ ນາງ. ສຸກຄຳໄຊ ພູອຸດົມ | ເຄືອຄ່າຍຕົວແທນຜູ້ຕິດພະຍາດເອດພາກໃຕ້ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | x | | x |
| 33 | ທ່ານ. ວິລັດ ຕົ້ນລະອອງທາ | ເຄືອຄ່າຍຕົວແທນຜູ້ຕິດພະຍາດວັນນະໂລກແຂວງສະຫວັນນະເຂດ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | | | | | x | | x |
| 34 | ທ່ານ. ບົວໄລ ວົງພະຈັນເພັດ | ເຄືອຄ່າຍຕົວແທນຜູ້ຕິດພະຍາດວັນນະໂລກແຂວງວຽງຈັນ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | x | | x |
| 35 | ທ່ານ. ບຸນລ້ຽງ ແກ້ວມີໄຊ | ເຄືອຄ່າຍຕົວແທນຜູ້ຕິດພະຍາດໄຂ້ຍຸງແຂວງສາລະວັນ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | | | | | x | | x |
| 36 | ທ່ານ ນາງ. ພອນລາວັນ ມູນທະວົງ | ເຄືອຄ່າຍຕົວແທນຜູ້ຕິດພະຍາດໄຂ້ຍຸງແຂວງສາລະວັນ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | x | | x |
| 37 | ທ່ານ. ເມດຕາ ຄຳຖາວອນ | LaoPHA | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | | | | | x | | x |
| 38 | ທ່ານ. ໄໝ່ໄທສັນ ນາຍົນ | LaoPHA | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | x | | x |
| 39 | ທ່ານ ນາງ. ພອນສະໄໝ ມົວມໍຕູ້ | ໂຄງການສິດທິແມ່ຍິງ ແລະ ເດັກນ້ອຍ ຊົນເຜົ່າ, ແຂວງຊຽງຂວາງ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | | | | | | | |
| 40 | ທ່ານ ນາງ. ຜີວດາວັນ ບົວລະພົນ | PEDA | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | x | | x |
| 41 | Ms. Emelita Santos Goddard | ເຄືອຄ່າຍຕົວແທນຜູ້ຕິດພະຍາດເອດພາກກາງ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | x | | | | | | | |
| 42 | Mr. John Holveck | ເຄືອຄ່າຍຕົວແທນຜູ້ຕິດພະຍາດເອດພາກໃຕ້ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | x | | x | x | |
| 43 | Mr. Eric Seastedt | ເຄືອຄ່າຍຕົວແທນຜູ້ຕິດພະຍາດວັນນະໂລກແຂວງສະຫວັນນະເຂດ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | x | | x | | x | x | |
| 44 | Mr. Luc Sabot | ເຄືອຄ່າຍຕົວແທນຜູ້ຕິດພະຍາດວັນນະໂລກແຂວງວຽງຈັນ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | | | |
| 45 | ທ່ານ ດຣ. ພິໄລສັກ ນະໄພວົງ | ສະຖາບັນການແພດເຂດຮ້ອນຝຼັ່ງໂກໂຟນີ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | x | | | | | | |
| 46 | ທ່ານ. ຈັນທະຄອນສຸກ ສຸດທິເດດ | ສະຖາບັນການແພດເຂດຮ້ອນຝຼັ່ງໂກໂຟນີ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | | | |
| 47 | ທ່ານ ນາງ. ແກ້ວມະນີວອນ ໄຊຍະວົງສາ | ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສົມບູນ | | | | | | | | | |
| 48 | ທ່ານ. ເຄນ ແສງມະນີຄຳ | ໂຮງງານຢາເລກ 3 | ອົງການຈັດຕັ້ງທີ່ບໍ່ສັງກັດລັດ | ສະມາຊິກສຳຮອງ | | | | | | | | | |

## ເອກະສານຕິດຄັດ 2: ການແຈ້ງຕົນເອງກ່ຽວກັບຜົນປະໂຫຍດຊໍ້າຊ້ອນ

**Declaration of Conflict of Interest**

ໜັງສືແຈ້ງຂໍ້ຂັດແຍ່ງດ້ານຜົນປະໂຫຍດ

I, the undersigned, ຂ້າພະເຈົ້າ

Name, ຊື່ ແລະ ນາມສະກຸນ: ……………………………………………………………………………..

Position, ຕໍາແໜ່ງ: ………………………………………………………………………………………

Organization, ອົງການຈັດຕັ້ງ: ……………………………………………………………………………

Contact/E-mail, ເບີໂທ-ອີເມວ: ………………………………………………………………………..

Having read and understood the conflict of interest policy of the CCM, please answer the following questions:
ພາຍຫຼັງໄດ້ອ່ານ ແລະ ຮັບຊາບນະໂຍບາຍກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດຂອງ CCM, ກະລຸນາຕອບຄໍາຖາມດັ່ງລຸ່ມນີ້:

1. As a CCM Member / Alternate and in the relation of your constituency, do you represent the organization/foundation that receives GF grant funding? (In case of positive answer, please specify):
   ໃນນາມສະມາຊິກສົມບູນ/ສໍາຮອງຂອງCCM ແລະ ອົງການຈັດຕັ້ງຕົວແທນຂະແໜງການ, ອົງການຈັດຕັ້ງ/ສະມາຄົມຂອງທ່ານໄດ້ຮັບທຶນຊ່ວຍເຫຼືອຈາກອົງການກອງທຶນໂລກ ຫຼື ບໍ່? (ຖ້າແມ່ນ ກະລຸນາລະບຸລາຍລະອຽດ)

   ……………………………………………………………………………………………………
   ……………………………………………………………………………………………………
   ……………………………………………………………………………………………………

2. In your organization/foundation, are you in a position that receives GFATM grant funding? (In case of positive answer, please specify)
   ພາຍໃນອົງການຈັດຕັ້ງ/ສະມາຄົມຂອງທ່ານ, ທ່ານຢູ່ໃນຕໍາແໜ່ງທີ່ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ ຫຼື ບໍ່? (ຖ້າແມ່ນ ກະລຸນາລະບຸລາຍລະອຽດ)

   ……………………………………………………………………………………………………
   ……………………………………………………………………………………………………
   ……………………………………………………………………………………………………

With this statement I declare that I will comply with all the provisions and procedures articulated in the Conflict of Interest policy and the implementing GF guidelines as necessary.
ອີງຕາມຂໍ້ມູນທີ່ໄດ້ລະບຸໄວ້ຂ້າງເທິງຂ້າພະເຈົ້າຂໍປະຕິຍານວ່າຈະປະຕິບັດຕາມທຸກຂໍ້ກໍານົດ ແລະ ລະບຽບການທີ່ໄດ້ລະບຸໄວ້ໃນນະໂຍບາຍກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ແລະ ຄູ່ມືການຈັດຕັ້ງປະຕິບັດຂອງກອງທຶນໂລກ.

Date, ວັນທີ: ……………………………………………………………………………………………...

Name, ຊື່ ແລະ ນາມສະກຸນ: …………………………………………………………………………...

Signature, ລາຍເຊັນ: